# ໔. ທ້າວຄຳແລ່ນນຳຕີນມ້າ

ເມື່ອຄູ່ຜົວເມັຽໄດ້ນຳເອົາມາລ້ຽງໄດ້ຫລາຍປີ ທ້າວຄຳກໍໃຫຍ່ ກ້າໜ້າບານຂຶ້ນມາ ສາມາດທີ່ຈະຕີບ້າຄວ່າງຄີໄດ້ແລ້ວ, ມື້ນຶ່ງພໍ່ຈະໄປສນາມຫລວງບ່ອນແຂ່ງມ້າຕີຄີ ຜູ່ເປັນພໍ່ຈຶ່ງບອກທ້າວຄຳ ວ່າ ມື້ອື່ນເຊົ້າ ໃຫ້ລູກຖືຂັນໝາກ ໄປຕາມຕີນມ້ານຳພໍ່ເດີ !!! ຝ່າຍ ທ້າວຄຳກໍມີຄວາມຍິນດີ ທີ່ຈະໄດ້ໄປນຳພໍ່ ; ເມື່ອເຖິງເວລາພໍ່ກໍຂຶ້ນ ຂີ່ມ້າອອກໜ້າ ໄປກ່ອນ ທ້າວຄຳກໍຖືຂັນໝາກຄ່ອຍຍ່າງໄປຕາມຮອຍ ຕີນມ້າ ໂດຍບໍ່ໄດ້ຟ້າວໄດ້ຮ້ອນຫຍັງໝົດ, ເມື່ອພໍ່ໄປເຖິງ ສນາມຫລວງ ແນມຫາທ້າວຄຳທາງໃດກໍບໍ່ເຫັນ ຢາກຄ້ຽວໝາກກໍປານນັ້ນ ຈົນຕາເວັນບ່າຍຈຶ່ງເຫັນທ້າວຄຳຍ່າງມາ ແບບບໍ່ຟ້າວບໍ່ຟັ່ງ ແລ້ວກໍຍື່ນຂັນໝາກໃຫ້ພໍ່ຄ້ຽວ ; ພໍ່ໄດ້ສໍ້ຖາມທ້າວຄຳວ່າ ເຮັດແນວໃດຄືມາຊັກຊ້າເອົາແທ້ເອົາວ່າ ເທື່ອໜ້າ ເທື່ອໃນຢ່າເຮັດແນວນີ້ເດີ.

ມື້ລູນມາພໍ່ກໍໄປສນາມຫລວງຕື່ມອີກ ຄາວນີ້ພໍ່ໄດ້ສັ່ງ ທ້າວຄຳ ຢ່າງເດັດຂາດວ່າ ໃຫ້ແລ່ນນຳມ້າໃຫ້ທັນ ຢ່າໃຫ້ຫ່າງມ້າ ທ້າວຄຳເອງກໍຍິນດີປະຕິບັດຕາມ, ເມື່ອພໍ່ຂຶ້ນຂີ່ມ້າຕີແລ່ນໄປຕາມທາງ ທ້າວຄຳກໍຖືຂັນໝາກແລ່ນນຳໂດຍຢ່າງບໍ່ຍອມຫ່າງເລີຍ ເຄື່ອງຄ້ຽວໝາກ ພູ ຢາ ປູນ ເຮັ່ຽຊະໄປສຸດທາງ ທ້າວຄຳກໍບໍ່ຫົວຊາຈະເກັບເອົາ ມີ ແຕ່ ຕັ້ງ ໜ້າ ຕັ້ງຕາ ແລ່ນໃຫ້ທັນມ້າຢ່າງດຽວ, ພໍໄປຮອດສນາມຫລວງ ພໍ່ແນມເບິ່ງຂັນໝາກ ບໍ່ເຫັນມີຫຍັງເຫຼືອຢູ່ເລີຍ, ເມື່ອຖືກພໍ່ສໍ້ຖາມ ທ້າວຄຳ ກໍຕອບຕາມຄວາມຈິງໂລດວ່າ ເຄື່ອງຄ້ຽວໝາກ ພູ ປູນ ຢາ ເຮັ່ຽຕາມທາງຕີນເອງກໍຮູ້ຈັກ ແຕ່ບໍ່ໄດ້ເກັບ ເອົາ ເພາະພໍ່ບອກແຕ່ວ່າບໍ່ໃຫ້ຫ່າງຈາກມ້າ ຜູ່ເປັນພໍ່ເຖິງແມ່ນຊິຫົວໝາກປານໃດກໍບໍ່ຊ່າງຊິຮ້າຍລູກ ເພາະວ່າຕີນເອງຫາກບອກບໍ່ຄັກບໍ່ແນ່ !!!.

ໃນມື້ຕໍ່ມາອີກ  ພໍ່ກໍສັ່ງຢ່າງດີ  ຄິດຮອບຄອບສົມຄວນ  ກ່ອນຈະຂຶ້ນມ້າໄປສູ່ສນາມຫຼວງ, ພໍ່ໄດ້ບອກທ້າວຄຳວ່າ  ຄາວນີ້ ຢ່າເຮັດຄືເກົ່າອີກເດີ້ !  ແລ່ນນຳໃຫ້ທັນມ້າ ມີຫຍັງຕົກເຮັ່ງ ກໍເກັບເອົາຈື່ໄວ້ເດີ້,  ເມື່ອມ້າແລ່ນໄປຕາມທາງວ່າແຕ່ແມ່ນຫຍັງຕົກຈາກຂັນໝາກ ຈາກຫລັງມ້າ ທ້າຄຳກໍເກັບເອົາໝົດ  ມ້າຂີ້ອອກ ທ້າວຄຳກໍເກັບເອົາໃສ່ຂັນໝາກໃຫ້ຮຽບຮ້ອຍ, ພໍໄປເຖິງບ່ອນພັກເຊົາ  ທ້າວຄຳກໍເອົາຂັນໝາກໃຫ້ພໍ່ຄ້ຽວ  ແຕ່ພໍ່ກໍໝົດຫວັງ  ເພາະຢູ່ໃນຂັນໝາກ ເຕັມໄປດ້ວຍຂີ້ມ້າເໝັນໄປກຸ້ມທົບ,  ຖ້າຊິຮ້າຍກໍບໍ່ເປັນ  ຮ້າຍເພາະຕົນເອງໄດ້ບອກແນວນັ້ນແທ້.

ບັດນີ້  ທ້າວຄຳມີອາຍຸໄດ້ ເຈັດປີພໍດີ,  ຜູ່ເປັນພໍ່ລ້ຽງເຫັນວ່າ  ສົມຄວນແລ້ວຈະນຳເອົາ ທ້າວຄຳໄປມອບໃຫ້ພຍາ,  ພໍ່ຈຶ່ງບອກໃຫ້ ທ້າວຄຳ ຜັດເນື່ອແຕ່ງໂຕຫວີຜົມແຍງແວ່ນ ປາກົດວ່າ ວາດທ່າ ວາດທາງຂອງ ທ້າວຄຳກໍສົມເປັນລູກພຍາແທ້,  ຈາກນັ້ນຜົວເມັຽ ຈຶ່ງພາກັນນຳເອົາ ທ້າວຄຳ ໄປມອບຄືນໃຫ້ພຍາ, ຝ່າຍພຍາກໍດີອົກດີໃຈ ເຫັນ ທ້າວຄຳ ໃຫຍ່ສູງມາດ້ວຍຄວາມເອົາໃຈໃສ່ຂອງຄູ່ຜົວເມັຽ,  ພຍາຈຶ່ງມອບ ເສື້ອຜ້າອາພອນ ເງິນຄຳໃຫ້ຄູ່ຜົວເມັຽ ເປັນການຕອບແທນບຸນຄຸນທີ່ໄດ້ລ້ຽງດູແລລູກໃຫ້ !!.

ເມື່ອລູກຂອງພຍາທັງສອງມີອາຍຸໄດ້ ສິບເອັດ ປີປາຍ  ເບິ່ງຜູ່ໃດກໍມີແຕ່ຜູ່ງາມໆ ຮູບໂສມຜິວພັນກໍຄ້າຍໆຄືກັນ  ພຍາຜູ່ເປັນພໍ່  ຮັກທ້າວທັງສອງປານວ່າແກ່ນຕາສອງໜ່ວຍເອົາໂລດ , ດ້ວຍກົດເກນຂອງສັງຂານ  ພຍາກໍນັບມື້ເຖົ້າແກ່ຊະຣາການ  ພຣະອົງຈຶ່ງມີຄວາມປະສົງຈະທົດສົງທ້າວ ໃຫ້ຂຶ້ນຄອງຣາຊແທນ,

ຈຶ່ງສັ່ງໃຫ້ເສນາອາມາດຕີຄ້ອງຮ້ອງປ່າວ  ໄທົ່ວທຸກທົ່ນແຫ່ງ ເພື່ອບອກເຕືອນໃຫ້ຊາວເມືອງ  ຕລອດເຖິງປະເທດໃກ້ຄຽງ ເຊິ່ງເຄີຍຜູກສັມພັນໄມຕຣີຕໍ່ກັນ ໃຫ້ມາຮ່ວມໃນພິທີທົດສົງ .

ການປະກອບພິທີທິດສິງ ທ້າວຂຶ້ນຄອງຣາຊແທນ
ໄດ້ປະກອບຂຶ້ນຕາມປະເພນີອັນຈົບງາມ ນັບແຕ່ນີ້ພຍາຜູ່ເປັນພໍ່ລີງມາເຖິງ ເສນາອາມາດ
ຕ່າງກໍພາກັນທິດສິງທ້າວ ດ້ວຍເຄື່ອງຄູ້ຈັນຫອມ ແລະ ມີການຄົບງັນສ້າງບັນຍາກາດ
ໃຫ້ມີຄວາມຄຶກຄື້ນມ່ວນຊື່ນຮຸ່ງເຮືອງ ໄປດ້ວຍແສງທຽນແສງທູບ ເຮັດໃຫ້ມີພິທີເພີ້ມຄວາມມີສງ່າຣາສີ.
ນັບແຕ່ນີ້ນັ້ນເປັນຕົ້ນມາ ທ້າວກໍໄປຂຶ້ນຄອງຣາຊສົມບັດປົກຄອງໄພ່ຟ້າປະຊາກອນແທນພໍ່
ດ້ວຍຄວາມຮົ່ມເຢັນເປັນສຸກ.

ກ່າວເຖິງພຍາຜູ່ເປັນພໍ່ ຫລັງຈາກໄດ້ທິດສິງທ້າວ ຂຶ້ນນັ່ງແທນແລ້ວ
ພຣະອົງກໍຮູ້ຕົວເອງດີວ່າຈະບໍ່ມີອາຍຸຍືນຍາວ ໄປອີກ ໃນມື້ນຶ່ງຈຶ່ງສັ່ງໃຫ້ທ້າວທັງສອງເຂົ້າໄປເຝົ້າຫາ
ແລ້ວກໍເວົ້າຄວາມຈິງສູ່ທ້າວເປັນຜູ່ລູກຄຶງຟັງວ່າ ເຈົ້ານີ້ເປັນຄົນລ້ຽງຍາກແທ້ໃດ !!
ເຈົ້າມີຊີວິດໃຫຍ່ຂຶ້ນມາໄດ້ ກໍຍ້ອນພໍ່ໄດ້ໄປຂໍເອົານ້ອງມາລ້ຽງຄູ່ກັບ ເຈົ້າ
ເພາະວ່າເຂົາເກີດຮ່ວມວັນຮ່ວມຍາມກັບເຈົ້າ, ດັ່ງນັ້ນ ຂໍໃຫ້ເຈົ້າ ຈົ່ງຮັກແພງນ້ອງຈົນເທົ້າທົວຊີວາ
ຢ່າຂ້າ ຢ່າຕີນ້ອງ ຖ້າວ່າຜິດ ພໍ່ຂໍກໍໃຫ້ເຈົ້າປ່ອຍ ຖ້າຜິດເລັກໆ ນ້ອຍໆ ກໍຢ່າຖືຊາຫາຄວາມ
ໃຫ້ອົດສາລ້ຽງນ້ອງໄວ້ເປັນໝູ່ຮ່ວມຊີວິດ ທັງເປັນຜູ່ຮັບໃຊ້ໃກ້ສິດຕິດແທດ.

ເມື່ອສັ່ງລູກເປັນທີ່ຮຽບຮ້ອຍ ພຣະອົງກໍສິ້ນຊີວິດ ປ່ອຍໃຫ້ລູກທັງສອງ
ພ້ອມເສນາອາມາດ ແລະ ຊາວເມືອງພົບກັບຄວາມໂສກເສົ້າ ຫງ່ວມເຫົງາ,
ສ່ວນທ້າວຄຳກໍສແດງຄວາມກະຕັນຍູຕໍ່ພໍ່ ຜູ່ລ້ຽງມາພາໃຫຍ່ ຈຶ່ງຕັດສິນໃຈແຖທົວເຂົ້າໄປບວດເປັນຈົວ
ເພື່ອຫວັງອຸທິດບຸນກຸສົນໃຫ້ພໍ່, ສຳລັບສົບຂອງພຍາພໍ່ກໍໄດ້ ເຮັດພິທີຄົບງັນເຖິງເຈັດເດືອນ
ຈຶ່ງທຳພິທີປົງສົບ ຈາກນັ້ນພຍາຜູ່ເປັນລູກ ກໍໄດ້ນຳເອົາກະດູກໄປກໍ່ທາດກວມເອົາໄວ້.

ອ່ານຕໍ່ເຣື່ອງ ທີ່ ສາມໃນເດືອນ ໜ້າ
ຜ, ຈົວຄຳກິນຂີ້ອ້ອຍ